ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

****** **** ******

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ສຳນັກງານ ຄຄຊ
ລົງ
ຮັບ
ເລກທີ 1044
ວັນທີ 14 OCT 2015
ໂທລະສັບ 021 217770

ເລກທີ: 40 /ທຫ

ນະຄອນຫຼວງວຽງຈັນ, ວັນທີ: 13 ຕຸລາ 2015

# ລາຍງານການເຄື່ອນໄຫວປະຈຳອາທິດ ທີ 28/09/2015 ຫາ 02/10/2015 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ ຂອງທະນາຄານແຫ່ງ ສປປ ລາວ

## I. ວຽກງານການເມືອງແນວຄິດ

ພະນັກງານທຸກຄົນມີຄວາມອຸ່ນອ່ຽນທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ ມີລະດີຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍຢ່າງເຄັ່ງຄັດ; ຕັ້ງໜ້າປະຕິບັດວຽກງານຕາມພາລະບົດບາດ, ຕາມການຈັດຕັ້ງມອບໝາຍ, ປະຕິບັດວຽກງານຕາມລະບອບລວມສູນປະຊາທິປະໄຕ ໂດຍບຸກຄົນຮັບຜິດຊອບ ແລະ ປະຕິບັດລະບຽບລັດຖະກອນຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

## II. ວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

#### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນເອີໂຣ ແລະ ບາງສະກຸນເງິນໃນພາກພື້ນອາຊີແຂງຄ່າຂຶ້ນ ເມື່ອທຽບໃສ່ເງິນໂດລາສະຫະລັດ ພາຍຫຼັງຕົວເລກການສັ່ງຊື້ສິນຄ້າຄົງທົນຂອງສະຫະລັດ (Durable GoodsOrders) ຫຼຸດລົງ 2% ໃນເດືອນ 8/2015 ຈາກເພີ່ມຂຶ້ນ 1,9% ໃນເດືອນຜ່ານມາ. ສ່ວນເງິນບາດ, ເປໂຊ, ຣູເປັຍ ແລະ ໂດລາສິງກະໂປ ອ່ອນຄ່າລົງເມື່ອທຽບໃສ່ເງິນໂດລາສະຫະລັດ ຍ້ອນຕົວເລກດຸນການຄ້າຂອງໄທ ແລະ ສິງກະໂປເກີນດຸນຫຼຸດລົງເປັນ 721 ລ້ານໂດລາສະຫະລັດໃນເດືອນ 8/2015 ຈາກ 770,45 ລ້ານໂດລາສະຫະລັດໃນເດືອນຜ່ານມາ ແລະ ເປັນ 4.242,78 ລ້ານໂດລາສິງກະໂປໃນເດືອນ 8/2015 ຈາກ 6.727,15 ລ້ານໂດລາສິງກະໂປໃນເດືອນຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 22/09/2015 | ອາທິດນີ້ 29/09/2015 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ເອີໂຣ/ໂດລາ | 1,1187 | 1,1251 | -0,56% |
| ໂດລາ/ເຢນ | 120,23 | 119,66 | 0,48% |
| ໂດລາ/ບາດ | 35,92 | 36,45 | -1,44% |
| ໂດລາ/ເປໂຊ | 46,55 | 46,91 | -0,76% |
| ໂດລາ/ຣູເປັຍ | 14.487,78 | 14.702,56 | -1,46% |
| ໂດລາ/ໂດລາສິງກະໂປ | 1,4127 | 1,4300 | -1,21% |
| ໂດລາ/ຢວນ | 6,3731 | 6,3632 | 0,16% |

1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

ລາຄານ້ຳມັນໃນຕະຫຼາດໂລກເພີ່ມຂຶ້ນ 1,07% ຈາກ 46;25 ໂດລາ/ບາເຣວ ມາເປັນ 46,74 ໂດລາ/ບາເຣວ ຍ້ອນຄວາມຕ້ອງການນ້ຳມັນຂອງສະຫະລັດເພີ່ມຂຶ້ນ ເຫັນໄດ້ຈາກຄັງສຳຮອງນ້ຳມັນດິບປະຈຳອາທິດທີ 18/9/2015 ຫຼຸດລົງ 1,92 ລ້ານບາເຣວ.

ລາຄາຄຳໃນຕະຫຼາດໂລກຫຼຸດລົງ 0,40% ຈາກ 1.133,45 ໂດລາ/ອອນ ມາເປັນ 1.128,90 ໂດລາ/ອອນ ຍ້ອນນັກລົງທຶນເທຂາຍຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອເອົາກຳໄລ ບວກກັບການແຂງຄ່າຂຶ້ນຂອງເງິນໂດລາສະຫະລັດໃນຕະຫຼາດສາກົນ.

2. ສະພາບເສດຖະກິດເງິນຕາພາຍໃນ

2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,01% ສຳລັບອັດຕາ ທທກ ແລະ ແຂງຄ່າຂຶ້ນ 0,16% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດແຂງຄ່າຂຶ້ນ 1,24% ສຳລັບອັດຕາ ທທກ ແລະ ແຂງຄ່າຂຶ້ນ 0,88% ສຳລັບອັດຕາຕະຫຼາດ, ທຽບໃສ່ປີຜ່ານມາເຫັນວ່າ: ເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,86% ສຳລັບອັດຕາ ທທກ ແລະ ອ່ອນຄ່າລົງ 1,64% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດແຂງຄ່າຂຶ້ນ 8,88% ສຳລັບອັດຕາ ທທກ ແລະ ແຂງຄ່າຂຶ້ນ 9,82% ສຳລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ 22/09/2015 | | | ອາທິດນີ້ 29/09/2015 | | | % (+) ເງິນກີບແຂງ/ (-)ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະນາຄານ[1] | | | | | | | | | |
| ໂດລາ | 8.138,80 | 8.163,96 | 8.148,86 | 8.141,65 | 8.167,95 | 8.148,39 | -0,04% | -0,05% | 0,01% |
| ບາດ | 229,40 | 230,53 | 230,37 | 226,59 | 227,70 | 227,55 | 1,24% | 1,25% | 1,24% |
| ອັດຕາຕະຫຼາດ | | | | | | | | | |
| ໂດລາ | 8.213,78 | 8.304,60 | 8.259,19 | 8.202,35 | 8.290,40 | 8.246,38 | 0,14% | 0,17% | 0,16% |
| ບາດ | 230,63 | 231,60 | 231,12 | 228,57 | 229,63 | 229,10 | 0,90% | 0,86% | 0,88% |
| ຜົດຕ່າງອັດຕາ ທທກ ແລະ ຕະຫຼາດ: (+) ແມ່ນອັດຕາທະນາຄານທຸລະກິດແຂງກວ່າຕະຫຼາດ, (-) ແມ່ນອັດຕາທະນາຄານທຸລະກິດອ່ອນກວ່າຕະຫຼາດ, | | | | | | | | | |
| ໂດລາ | 0,92% | 1,72% | 1,35% | 0,75% | 1,50% | 1,20% | | | |
| ບາດ | 0,54% | 0,46% | 0,32% | 0,87% | 0,85% | 0,68% | | | |

2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາ ປະຈຳອາທິດນີ້ເພີ່ມຂຶ້ນ 0,11% ທຽບໃສ່ວັນທີ 25/09/2015, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 30,65%;
- ປະລິມານເງິນ M2 ເພີ່ມຂຶ້ນ 4,23% ເມື່ອທຽບໃສ່ວັນທີ 25/09/2015, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 23,85%.

2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນ ປະຈຳອາທິດ (ວັນທີ 28/09/2015) ເຫັນວ່າ ທທກ ຊື້ໂດລາສຸດທິ 30,39 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 87,53 ລ້ານໂດລາ ແລະ ຂາຍໂດລາໄດ້ 57,15 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 1.693,04 ລ້ານບາດ (ໃນນີ້ ຊື້ບາດໄດ້ 365,64 ລ້ານບາດ ແລະ

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທກ ແມ່ນໄດ້ຈາກອັດຕາສະເລ່ຍຖົວງນ້ຳໜັກ;

ຂາຍບາດໄດ້ 2.058,69 ລ້ານບາດ); ມູນຄ່າການຊື້-ຂາຍເງິນຕາ ແລະ [illegible]
ເພີ່ມຂຶ້ນ 21,35% ແຕ່ຫຼຸດລົງ 12,56% ສຳລັບເງິນບາດ;

- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີ ຈຳນວນ 3,68 ລ້ານໂດລາ ແລະ ເງິນບາດມີຈຳນວນ 20,71 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຊື້ໂດລາສຸດທິ ຈຳນວນ 10,23 ລ້ານໂດລາ ແຕ່ຂາຍບາດສຸດທິ ຈຳນວນ 7,25 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຂາຍໂດລາໄດ້ສຸດທິ ຈຳນວນ 180,29 ລ້ານໂດລາ ແຕ່ຊື້ບາດໄດ້ສຸດທິ ຈຳນວນ 2.847,79 ລ້ານບາດ.

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດທີຜ່ານມາ 22/09/2015 | | ອາທິດທີ 28/09/2015 | | (%) +ເພີ່ມຂຶ້ນ /-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1, ການຊື້ເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 15,33 | 168,90 | 21,96 | 234,34 | 43,25% | 38,74% |
| - ທ/ຄທຸລະກິດອື່ນໆ | 65,19 | 171,20 | 65,57 | 131,30 | 0,58% | -23,30% |
| ລວມຊື້: | **80,53** | **340,11** | **87,53** | **365,64** | **8,70%** | **7,51%** |
| 2, ການຂາຍເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 16,90 | 147,92 | 29,41 | 164,42 | 74,07% | 11,15% |
| - ທ/ຄທຸລະກິດອື່ນໆ | 21,80 | 2.284,59 | 27,73 | 1.894,27 | 27,23% | -17,09% |
| ລວມຂາຍ: | **38,69** | **2.432,51** | **57,15** | **2.058,69** | **47,69%** | **-15,37%** |
| ຊື້-ຂາຍສຸດທິ ທທກ | **41,83** | **-2.092,41** | **30,39** | **-1.693,04** | **-27,36%** | **-19,09%** |
| ຜິດດ່ຽງ ຊື້-ຂາຍ | 51,95 | -615,22 | 34,72 | -463,03 | -172,27% | 152,53% |
| ມູນຄ່າການຊື້-ຂາຍ | **119,22** | **2.772,62** | **144,68** | **2.424,33** | **21,35%** | **-12,56%** |
| 3, ຊື້-ຂາຍລະຫວ່າງ ທຫລ ກັບ ທທກ | | | | | | |
| - ທຫລ ຊື້ຈາກ ທທກ | 0,01 | 50,00 | 10,23 | 20,75 | | |
| - ທຫລ ຂາຍໃຫ້ ທທກ | 11,15 | 0,00 | 0,00 | 28,00 | | |
| ຊື້-ຂາຍສຸດທິ ທຫລ | **-11,14** | **50,00** | **10,23** | **-7,25** | | |
| 4, ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | **2,73** | **71,07** | **3,68** | **20,71** | | |
| 5, ຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນ ອື່ນໆ (ກະຊວງການເງິນ, ຮ້ານແລກປ່ຽນ) | | | | | | |
| - ທຫລ ຊື້ຈາກ ພາກສ່ວນອື່ນໆ | 30,38 | 3.454,30 | 18,75 | 3.564,44 | | |
| - ທຫລ ຂາຍໃຫ້ ພາກສ່ວນອື່ນໆ | 114,18 | 0,00 | 199,04 | 716,65 | | |
| ຊື້-ຂາຍສຸດທິ ທຫລ | **-83,80** | **3.454,30** | **-180,29** | **2.847,79** | | |

## 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ປະຈຳເດືອນ 09/2015 (ຕົວເລກຄາດຄະເນ) ຄາດວ່າຈະຢູ່ໃນລະດັບ 1,31% ເພີ່ມຂຶ້ນ 0,02% ຈາກ 1,29% ໃນເດືອນ 08/2015 ຍ້ອນລາຄາອາຫານຄາດວ່າຈະມີທ່າອ່ຽງເພີ່ມສູງຂຶ້ນ ເວົ້າສະເພາະແມ່ນລາຄາເຂົ້າສານ ແລະ ປະເພດ

ຜົນລິດ ນອກຈາກເປັນໄລຍະເລີ່ມເປີດສົກຮຽນໃໝ່ຈະມີການໃຊ້ຈ່າຍຄ່າຮຽນ ແລະ [illegible] ສຶກສາ ແລະ ໝວດເຄື່ອງນຸ່ງທີ່ຄາດວ່າຈະເພີ່ມຂຶ້ນ.

2.5 <u>ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ</u>

ທຫລ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 259,06 ລ້ານໂດລາ ສະຫະລັດທຽບເທົ່າ ເຊິ່ງເພີ່ມຂຶ້ນ 47,8% ທຽບໃສ່ອາທິດຜ່ານມາ.

2.6 <u>ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ</u>

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 1.062 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 20,81% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 773,50 ຕື້ກີບ ເພີ່ມຂຶ້ນ 13,93% ເມື່ອທຽບໃສ່ອາທິດຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (25/09-01/10/2015) ມີຈຳນວນ 1.865 ຄັ້ງ ໂດຍມີມູນຄ່າ 374,05 ຕື້ກີບ ເພີ່ມຂຶ້ນ 56,44% ຊຶ່ງທະນາຄານການຄ້າຕ່າງປະເທດລາວ ເຮັດທຸລະກຳຫຼາຍກວ່າໝູ່ ຈຳນວນ 497 ຄັ້ງ.

2.7 <u>ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ</u>

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ ປິດຢູ່ທີ່ 1.226,45 ຈຸດ ບໍ່ປ່ຽນແປງ ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດມີປະລິມານຊື້-ຂາຍຮຸ້ນທັງໝົດ 102.446 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 369,02 ລ້ານກີບ ເພີ່ມຂຶ້ນ 126,07% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 26,77% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 5.881 ກີບ/ຮຸ້ນ ເພີ່ມຂຶ້ນ 288 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 4.447 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 26,15 ລ້ານກີບ ຫຼຸດລົງ 65,89% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 31,57% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,78%[2].

ຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 6.087 ກີບ/ຮຸ້ນ ບໍ່ປ່ຽນແປງເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 6.796 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 41,36 ລ້ານກີບ ເພີ່ມຂຶ້ນ 1,57% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 12,43% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 13,82%[3].

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາປິດທີ່ 7.700 ກີບ/ຮຸ້ນ ບໍ່ປ່ຽນແປງ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 5.000 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 38,50 ລ້ານກີບ, ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 50% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ (LWPC) ທັງໝົດ, ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,72%[4].

ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 3.051 ກີບ/ຮຸ້ນ ເພີ່ມຂຶ້ນ 244 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 86.203 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 263,00 ລ້ານກີບ ເພີ່ມຂຶ້ນ 473,83%. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 16,36% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,68%[5].

---

[2] ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[3] ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 20%;

[4] ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;

[5] ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

3. <u>ວຽກງານອື່ນໆ ທີ່ພົ້ນເດັ່ນ.</u>

- ສຳເລັດການອອກແຮງງານລວມອ້ອມແອ້ມສຳນັກງານ ເພື່ອຂໍານັບຮັບຕ້ອນວັນສ້າງຕັ້ງທະນາຄານແຫ່ງ ສປປ ລາວ ຄົບຮອບ 47 ປີ;
- ສຳເລັດການຈັດພິທີແຂ່ງຂັນກິລາຂອງຂະແໜງການທະນາຄານ ເພື່ອຮັບຕ້ອນວັນສ້າງຕັ້ງທະນາຄານແຫ່ງ ສປປ ລາວ ຄົບຮອບ 47 ປີ ທີ່ເດີ່ນເຈົ້າອານຸວົງ;
- ສຳເລັດການປຽນບັນຊີຊໍາລະກະຊວງການເງິນຕາມແຈ້ງການຂອງກະຊວງດັ່ງກ່າວ;
- ສຳເລັດການເຂົ້າຮ່ວມຝຶກອົບຮົມ: ❶ຝຶກອົບຮົມວຽກງານກວດກາພັກ-ລັດ ໃນຂະແໜງການທະນາຄານ ຊຸດທີ 5 ທີ່ສະຖາບັນການທະນາຄານ, ❷ຝຶກອົບຮົມ ໃນຫົວຂໍ້ "Bond Market Development In ASean Countries (II) ທີ່ປະເທດ ຍີ່ປຸ່ນ;
- ສຳເລັດການແຈ້ງຕອບທະນາຄານທຸລະກິດຈໍານວນ 03 ແຫ່ງ ກ່ຽວກັບນະໂຍບາຍສິນເຊື່ອ ເພື່ອແກ້ໄຂຜົນເສຍຫາຍຈາກໄພນໍ້າຖ້ວມປີ 2015;
- ສຳເລັດ ເຂົ້າຮ່ວມການໄປຢ້ຽມຢາມ ແລະ ແລກປ່ຽນບົດຮຽນ ລະຫວ່າງຊະມະຊິກ ສກຈມ ພາກເໜືອ, ພາກກາງ ແລະ ພາກໃຕ້ ທີ່ແຂວງຈໍາປາສັກ;
- ສຳເລັດການເຂົ້າຮ່ວມກອງປະຊຸມສໍາມະນາ ໃນຫົວຂໍ້: "ການສືບສວນ-ສອບສວນທາງການເງິນ" ຢູ່ປະເທດໄທ;
- ສຳເລັດການຈັດກອງປະຊຸມຜ່ານ "ຮ່າງດໍາລັດວ່າດ້ວຍໂຮງຊວດຈໍາ" ແລະ "ຮ່າງດໍາລັດວ່າດ້ວຍທຸລະກິດເຊົ່າສິນເຊື່ອ" ທີ່ ທຫລ;

III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ດໍາເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ດັ່ງທີ່ໄດ້ກໍານົດໄວ້ໃນແຜນວຽກງານປະຈໍາປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ;
- ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາລະຫວ່າງທະນາຄານ;
- ສືບຕໍ່ພິມທະນະບັດງວດ 5 ປະເພດໃບ 2.000 ກີບໃໝ່ ງວດ 5 ຊຸດ 2 ຈໍານວນ 30 ລ້ານໃບ;
- ສືບຕໍ່ຄົ້ນຄວ້າ: ❶ສຶກສາຄົ້ນຄວ້າເນື້ອໃນຂອງຫຼັກການ ບາເຊວ 2, ວິທີປະຕິບັດ ແລະ ບົດຮຽນຂອງສາກົນ ເພື່ອເປັນແນວທາງໃນການຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດ; ❷ຄົ້ນຄວ້າຮ່າງລະບຽບກ່ຽວກັບການຍຶດ, ອາຍັດທຶນຂອງຜູ້ກໍ່ການຮ້າຍ ແລະ ການຟອກເງິນ ເພື່ອຜັນຂະຫຍາຍ ມາດຕາ 38,39 ແລະ 40 ຂອງກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ຍັດຕິ 1267,1373 ຂອງສະພາຄວາມໝັ້ນຄົງ ສປຊ, ❸ຄົ້ນຄວ້າລະບຽບກ່ຽວກັບການປັບໃໝ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ລະເມີດກົດໝາຍວ່າດ້ວຍການຕ້ານສະກັດກັ້ນ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ❹ຄົ້ນຄວ້າຮ່າງດໍາລັດວ່າດ້ວຍ ປົກປ້ອງຜູ້ບໍລິໂພກທາງການເງິນ, ❺ຄົ້ນຄວ້າລະບຽບວ່າດ້ວຍ Financial Service provider ກ່ຽວກັບສະຖາບັນການເງິນ, ❻ສືບຕໍ່ຄົ້ນຄວ້າໂຄງສ້າງຂອງຮ່າງດໍາລັດ ວ່າດ້ວຍການເຄື່ອນໄຫວວຽກງານຂໍ້ມູນສິນເຊື່ອ;
- ສືບຕໍ່ປະຕິບັດເງື່ອນໄຂ PRSO 8-11 (ປີ2012-2015);
- ສືບຕໍ່ການຝຶກຊ້ອມໃຫ້ພ້ອມພຽງກັນຂອງກ້ອນກໍາລັງ ທີ່ເດີ່ນທາດຫຼວງ ເພື່ອກະກຽມໃນພິທີສະເຫຼີມສະຫຼອງ 2 ວັນປະຫວັດສາດປີ 2015 ໃນວັນທີ 2 ທັນວາ 2015.

ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ.

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ພາສີ ພິມມະກອນ